**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ຫ້ອງການ

ເລກທີ: 1918 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 09 JUN 2026

## ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ແລະ ການຕິດຕັ້ງຈໍ **LED** ໃສ່ຫ້ອງປະຊຸມ ແລະ ຕິດຕັ້ງພື້ນເວທີດ້ວຍໄມ້ທຽມ.

**ເລື່ອງ:** ເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງ ສໍາລັບການສະໜອງ ແລະ ຕິດຕັ້ງຈໍ **LED P2.5 Indoor Full Color Display 3840Hz** ແລະ ສ້ອມແປງເຮັດພື້ນເວທີໃໝ່ດ້ວຍການໃສ່ໂຄງເຫຼັກ ແລະ ປູພື້ນເວທີດ້ວຍໄມ້ທຽມ ຂອງກະຊວງການຕ່າງປະເທດ.

ຫ້ອງການ ກະຊວງການຕ່າງປະເທດ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ແລະ ການຕິດຕັ້ງຈໍ **LED P2.5** ແລະ ສ້ອມແປງເຮັດພື້ນເວທີໃໝ່ດ້ວຍການໃສ່ໂຄງເຫຼັກ ແລະ ປູພື້ນເວທີດ້ວຍໄມ້ທຽມ ຂອງກະຊວງການຕ່າງປະເທດ, ເຊິ່ງມີລາຍລະອຽດ ດັ່ງນີ້:

1. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ **30/ສພຊ**, ລົງວັນທີ **2** ພະຈິກ **2017** ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
2. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະພາສີອາກອນ ຖືກຕ້ອງຕາມກົດໝາຍ.
3. ບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການໃຫ້ບໍລິການຕິດຕັ້ງຈໍ **LED P2.5 Indoor Full Color Display 3840Hz** ແລະ ສ້ອມແປງເຮັດພື້ນເວທີໃໝ່ດ້ວຍການໃສ່ໂຄງເຫຼັກ ແລະ ປູພື້ນເວທີດ້ວຍໄມ້ທຽມ ຂອງ ກະຊວງການຕ່າງປະເທດ.ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານປະມູນຄົບຊຸດໄດ້ ທີ່ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ (ໂທລະສັບ 021 416572, 020 56346344), ເຊິ່ງມີສໍານັກງານຕັ້ງຢູ່ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:00 ໂມງ ແລະ 13:00-16:00 ໂມງ, ເລີ່ມຂາຍຊອງປະມູນ ວັນທີ 10/06./2026, ລາຄາຊອງປະມູນ 1,000,000 ກີບ (ໜຶ່ງລ້ານກີບ), ຈໍານວນເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ, ວິທີການຊໍາລະເງິນຕ້ອງຈ່າຍເປັນເງິນສົດ.
4. ກໍານົດສົ່ງຊອງປະມູນ ຕ້ອງໃຫ້ສົ່ງຫາ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ ກ່ອນເວລາ 14..00 ໂມງ ຂອງວັນທີ 15../07/2026, ຖ້າຊອງປະມູນໃດສົ່ງຊ້າກ່ອນກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ.

5. ກຳນົດເປີດຊອງປະມູນແມ່ນວັນທີ 15 /07/2026 ເວລາ 14 :00 ໂມງ ທີ່ ຫ້ອງປະຊຸມຊັ້ນ 3 ຕຶກ B ຂອງ ກະຊວງການຕ່າງປະເທດ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ, ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ.

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ຕາມວັນເວລາດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງການຕ່າງປະເທດ
ຫ້ອງການ

ບົວວອນທັດ ດວງຈັກ